# ລົງທະບຽນເມື່ອໃດກໍ່ຕາມ ແລະ ປະຢັດເງິນຫຼາຍຂຶ້ນດ້ວຍ Cascade Care Savings

ຊ່ວງເວລາລົງທະບຽນພິເສດແມ່ນມີໃຫ້ສຳລັບບຸກຄົນ ແລະ ຄອບຄົວທີ່ມີສິດຈົນເຖິງ 250% ຂອງລະດັບຄວາມທຸກຍາກທີ່ກຳນົດໂດຍລັດຖະບານກາງ (FPL) ທີ່ບໍ່ໄດ້ຮັບ Cascade Care Savings.

**ສຳລັບຄົວເຮືອນທີ່ໄດ້ຮັບສູງເຖິງ 250% ຂອງ FPL** (ໃຊ້ຕາຕະລາງຂ້າງລຸ່ມນີ້ເພື່ອເບິ່ງວ່າທ່ານເຂົ້າເກນເງື່ອນໄຂ ຫຼື ບໍ່)

**ປະຢັດເງິນອີກດ້ວຍ Cascade Care Savings, ເງິນອຸດໜູນຂອງລັດທີ່ຫຼຸດຈຳນວນຕົ້ນທຶນປະຈຳເດືອນຂອງທ່ານ**

**ການບໍລິການທີ່ຄຸ້ມຄອງຫຼາຍຂຶ້ນໂດຍຄ່າໃຊ້ຈ່າຍຕົວລົງທີ່ໜ້ອຍລົງ**

**ມີໃຫ້ຢູ່ *Washington Healthplanfinder* ເທົ່ານັ້ນ**

## Cascade Care Savings ແມ່ນຫຍັງ?

Cascade Care Savings ແມ່ນເງິນອຸດໜູນຂອງລັດທີ່ສາມາດຊ່ວຍຫຼຸດຈຳນວນຕົ້ນທຶນປະຈຳເດືອນຂອງທ່ານໃນການປະກັນສຸຂະພາບ. ຄົນທີ່ເຂົ້າເກນເງື່ອນໄຂແມ່ນສາມາດລົງທະບຽນໃນແຜນປະກັນສຸຂະພາບໄດ້ໝົດປີ. ເພື່ອມີສິດສຳລັບການປະຢັດເງິນເຫຼົ່ານີ້, ທ່ານຕ້ອງເລືອກແຜນປະກັນປະເພດເງິນ ຫຼື ຄຳຂອງ Cascade Care.

ແຜນການ Cascade Care ແມ່ນສະເໜີໃຫ້ໂດຍທຸກບໍລິສັດໃນເຂດປົກຄອງທັງໝົດໃນລັດວໍຊິງຕັນ.

## ລາຍໄດ້ຂອງທ່ານເຮັດໃຫ້ທ່ານເຂົ້າເກນເງື່ອນໄຂສຳລັບ Cascade Care Savings ບໍ?

ຕາຕະລາງຢູ່ເບື້ອງຂວາກຳນົດຈຳນວນສູງສຸດທີ່ຄົວເຮືອນສາມາດຫາໄດ້ ເພື່ອທີ່ຈະເຂົ້າເກນເງື່ອນໄຂສຳລັບເງິນອຸດໜູນ Cascade Care Savings.

| ບຸກຄົນທີ່ຢູ່ໃນຄອບຄົວ/ຄົວເຮືອນ | ລາຍໄດ້ຕໍ່ເດືອນ | ລາຍໄດ້ຕໍ່ປີ |
|---|---|---|
| **1** | $3,038 | $36,450 |
| **2** | $4,108 | $49,300 |
| **3** | $5,179 | $62,150 |
| **4** | $6,250 | $75,000 |
| **5** | $7,321 | $87,850 |
| **6** | $8,392 | $100,700 |
| **7** | $9,463 | $113,550 |
| **8** | $10,533 | $126,400 |

**ສຳລັບຄອບຄົວ/ຄົວເຮືອນທີ່ມີຫຼາຍກວ່າແປດຄົນ, ໃຫ້ເພີ່ມ $12,850 ຕໍ່ຄົນ/ປີຕື່ມອີກ. (ຕາຕະລາງນີ້ນຳໃຊ້ສຳ ລັບປີແຜນປະກັນ 2024 ແລະ ມີການອັບເດດທຸກໆປີ).*

washington **healthplanfinder**
click. compare. covered.

ໂທລະສັບ: **1-855-923-4633**
TTY/TDD: **1-855-627-9604**

ເຂົ້າເບິ່ງເວັບໄຊຂອງພວກເຮົາຢູ່
**wahealthplanfinder.org**